**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພັກປະຊາຊົນປະຕິວັດລາວ

ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ.36./ຄອສພ

ນະຄອນຫຼວງວຽງຈັນ, ລົງວັນທີ.17.ກໍລະກົດ 2025

# ແຈ້ງການ(ເພີ່ມເຕີມ)

**ເຖິງ: ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ.**

**ເລື່ອງ: ການປັບປຸງກົງຈັກພາຍໃນ ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.**

- ອີງຕາມ ທິດທາງການປັບປຸງກົງຈັກການຈັດຕັ້ງຢູ່ທ້ອງຖິ່ນ ຂອງຄະນະຮັບຜິດຊອບປັບປຸງກົງຈັກການຈັດ ຕັ້ງ ຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 302/ຄຈສພ, ລົງວັນທີ 04/07/2025;
- ອີງຕາມ ແຈ້ງການປັບປຸງກົງຈັກພາຍໃນ ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ສະບັບເລກທີ 33/ຄອສພ, ລົງວັນທີ 11 ກໍລະກົດ 2025;
- ອີງຕາມ ທິດຊີ້ນຳຂອງ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ໃນວັນທີ 14/07/2025.

ເພື່ອຄວາມເປັນເອກະພາບໃນການກຳນົດໂຄງປະກອບກົງຈັກການຈັດຕັ້ງຂອງ ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ ແລະ ຄະນະໂຄສະນາອົບຮົມເມືອງ, ນະຄອນ ພາຍຫຼັງໂອນວຽກງານສື່ມວນຊົນ(ວຽກຖະແຫຼງຂ່າວ) ມາຂຶ້ນກັບຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ ແລະ ຄະນະໂຄສະນາອົບຮົມເມືອງ, ນະຄອນ ຄະນະໂຄສະນາອົບຮົມສູນກາງພັກ ແຈ້ງເພີ່ມເຕີມດັ່ງນີ້:

**1. ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງຂັ້ນແຂວງ, ນະຄອນຫຼວງວຽງຈັນ ມີ 05 ຂະແໜງການຄື:**

1). ຂະແໜງບໍລິຫານ.

2). ຂະແໜງໂຄສະນາ.

3). ຂະແໜງອົບຮົມ.

4). ຂະແໜງສັງລວມ ແລະ ຂໍ້ມູນຂ່າວສານ.

5). ຂະແໜງສື່ມວນຊົນ (ວຽກຖະແຫຼງຂ່າວ).

**2. ໂຄງປະກອບກົງຈັກການຈັດຕັ້ງຂັ້ນເມືອງ, ນະຄອນ ມີ 03 ໜ່ວຍງານ.**

1). ໜ່ວຍງານບໍລິຫານ.

2). ໜ່ວຍງານອົບຮົມ.

3). ໜ່ວຍງານໂຄສະນາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ພັກປະຊາຊົນປະຕິວັດລາວ ຄະນະໂຄສະນາອົບຮົມສູນກາງພັກ

**ລາວປາວຊົ່ງ ນະວົງໄຊ**